7.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ພັກປະຊາຊົນປະຕິວັດລາວ
ຄະນະປະຈຳພັກແຂວງ

ເລກທີ...02.../ຄປພຂ
ເຊກອງ, ວັນທີ..19.02.2024.....

# ມະຕິ
## ກອງປະຊຸມວິສາມັນຂອງຄະນະປະຈຳພັກແຂວງ

ກອງປະຊຸມວິສາມັນຂອງຄະນະປະຈຳພັກແຂວງ ໄດ້ດຳເນີນໃນ ເວລາ 08 ໂມງ 30 ນາທີ ຂອງ ວັນທີ 13 ກຸມພາ 2024 ທີ່ຫ້ອງປະຊຸມຄະນະປະຈຳພັກແຂວງ ຫ້ອງວ່າການແຂວງ, ເຊິ່ງມີບັນດາສະຫາຍຄະນະປະຈຳເຂົ້າຮ່ວມທັງໝົດ 08 ສະຫາຍ, ຍິງ 02 ສະຫາຍ; ຂາດ 02 ສະຫາຍ (ປະຊຸມຕ່າງແຂວງ), ລະອຽດມີດັ່ງລຸ່ມນີ້:

1. ສະຫາຍ ເຫຼັກໄຫລ ສີວິໄລ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງເຊກອງ ເປັນປະທານກອງປະຊຸມ.
2. ສະຫາຍ ດົງເພັດ ພະຍົນ ຄະນະປະຈຳພັກແຂວງ,ຮອງເລຂາພັກແຂວງ,ປະທານສະພາປະຊາຊົນແຂວງ.
3. ສະຫາຍ ບຸນຫຼາຍ ບຸດທີ ຄະນະປະຈຳພັກແຂວງ, ຮອງເລຂາພັກແຂວງ, ຫົວໜ້າຄະນະຈັດຕັ້ງແຂວງ.
4. ສະຫາຍ ນ.ບຸນຮຽງ ບຸນດຈິດ ຄະນະປະຈຳພັກແຂວງ, ປະທານແນວລາວສ້າງຊາດແຂວງ.
5. ສະຫາຍ ປອ ສົມນຶກ ສິລິບຸນລັງ ຄະນະປະຈຳພັກແຂວງ, ປະທານກວດກາພັກ-ລັດແຂວງ.
6. ສະຫາຍ ປອ ແພງສີ ສີລາວີ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ.
7. ສະຫາຍ ພົຈວ ທອງສີ ກຸນສະນະ ຄະນະປະຈຳພັກແຂວງ, ຫົວໜ້າການທະຫານ ກບຊ ແຂວງ
8. ສະຫາຍ ນ. ສີສະໜ່ງ່າ ແກ້ວດວງດີ ຄະນະປະຈຳພັກແຂວງ, ຫົວໜ້າຄະນະໂຄສະນາອົບຮົມແຂວງ.

❖ ສະຫາຍ ວິແຊມ ໄຊສົກລາ ຮອງຫົວໜ້າຫ້ອງວ່າການແຂວງ ຜູ້ບັນທຶກກອງປະຊຸມ.

I. <u>ກອງປະຊຸມໄດ້ຄົ້ນຄ້ວາປຶກສາຫາລືບາງວຽກງານສຳຄັນດັ່ງລຸ່ມນີ້:</u>

1. ກ່ຽວການແບ່ງງານ,ແບ່ງຄວາມຮັບຜິດຊອບຄືນໃໝ່ໃນຄະນະປະຈຳພັກແຂວງ.
2. ກ່ຽວກັບການປັບປຸງກົນຈັກການຈັດຕັ້ງ (ເມືອງກະລຶມ ແລະ ເມືອງດາກຈຶງ)
3. ກ່ຽວກັບຜູ້ທີ່ຮອດອາຍຸກະສຽນພັກຜ່ອນ-ຮັບອຸດໜູນບຳນານ.
4. ກ່ຽວກັບການຈົບ ປອ ຂອງທ່ານ ສາກົນ ພອນປະເສີດ.

**<u>ຜ່ານການຄົ້ນຄ້ວາ ແລະ ປຶກສາຫາລືຂອງກອງໄດ້ເຫັນດີເປັນເອກະພາບດັ່ງມີເນື້ອໃນລຸ່ມນີ້:</u>**

**1. <u>ກ່ຽວກັບການແບ່ງງານ,ແບ່ງຄວາມຮັບຜິດຊອບຄືນໃໝ່ໃນຄະນະປະຈຳເຫັນດີດັ່ງນີ້:</u>**

①. ສະຫາຍ ເຫຼັກໄຫລ ສີວິໄລ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງ ຊີ້ນຳວຽກຫ້ອງວ່າການແຂວງ.

②. ສະຫາຍ ບຸນຫຼາຍ ບຸດທີ ຮອງເລຂາພັກແຂວງ ,ຫົວໜ້າຄະນະຈັດຕັ້ງແຂວງ ,ຊີ້ນຳວຽກການເມືອງແນວຄິດ, ວຽກພັກ-ພະນັກງານ.

③. ສະຫາຍ ຄຳສອນ ກອນເຢີ ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງ ຊີ້ນຳເມືອງດາກຈຶງ ລວມທັງຊີ້ນຳກອງປະຊຸມໃຫຍ່ເມືອງດາກຈຶງ.

④. ສະຫາຍ ຂັນຕີ ສີລະວົງສາ ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງ ຊີ້ນຳດ່ານສາກົນດາກຕະອອກນາມຢາງ.

⑤. ສະຫາຍ ນ.ບຸນຮຽງ ບຸນຈິດ ຄະນະປະຈຳພັກແຂວງ, ປະທານແນວລາວສ້າງຊາດແຂວງ, ຊີ້ນຳອົງການຈັດຕັ້ງມະຫາຊົນ (ຊາວໜຸ່ມ, ສະຫະພັນແມ່ຍິງ ແລະ ສະຫະພັນກຳມະບານ)

⑥. ສະຫາຍ ນ. ສີສະໜ່ງ່າ ແກ້ວດວງດີ ຄະນະປະຈຳພັກແຂວງ, ຫົວໜ້າຄະນະໂຄສະນາອົບຮົມແຂວງ ຊີ້ນຳໂຮງຮຽນທິດສະດີການເມືອງ-ການປົກຄອງແຂວງ.

**2. <u>ກ່ຽວກັບກົນຈັກການຈັດຕັ້ງ (ເມືອງກະລຶມ ແລະ ເມືອງທ່າແຕງ).</u>**



สแกนด้วย CamScanner

①. ເຫັນດີໃຫ້ ສະຫາຍ ອໍບົວລາ ອ່ອນມະໄລວົງ ກຳມະການພັກແຂວງ, ເລຂາພັກເມືອງ, ເຈົ້າເມືອງກະລຶມ ພັກຜ່ອນ-ເຂົ້າຮັບອຸດໜູນບໍານານ.

②. ສະຫາຍ ບຸນສອນ ບຸດບຸນມາ ຮອງເລຂາພັກເມືອງທ່າແຕງ ເຫັນດີໃຫ້ສືບຕໍ່ຈົນຮອດກອງປະຊຸມໃຫຍ່ຂອງເມືອງ.

③. ກ່ຽວກັບ ສະຫາຍ ໄຊຍະທັດ ກ້ອນຄໍາໝັ້ນ ຮອງເລຂາພັກເມືອງລະມາມ ເນື່ອງຈາກວ່າຜູ້ກ່ຽວເປັນ ສລຂ ເຫັນດີໃຫ້ຮັກສາໄວ້ກ່ອນ.

**3. <u>ກ່ຽວກັບພາກສ່ວນທີ່ຮອດອາຍຸກະສຽນພັກຜ່ອນ-ຮັບອຸດໜູນບໍານານເຫັນດີ ຄື:</u>**

①. ສໍາລັບ ສະຫາຍ ບຸນຮຽງ ບຸນຈິດ ຄະນະປະຈໍາພັກແຂວງ, ປະທານແນວລາວສ້າງຊາດແຂວງ ແມ່ນເຫັນດີສະເໜີໃຫ້ພັກຜ່ອນ-ຮັບອຸດໜູນບໍານານ ງວດທີ III ປີ 2024 ແລະ ພັກຜ່ອນງວດ I ປີ2025.

②. ສ່ວນສະຫາຍອື່ນໆ ທີ່ຮອດອາຍຸກະສຽນພັກຜ່ອນ-ຮັບອຸດໜູນບໍານານແລ້ວນັ້ນ, ແມ່ນເຫັນດີ ປະຕິບັດຕາມລະບຽບການ (ສະເໜີ ງວດທີ I ປີ2024 ແລະ ໃຫ້ພັກຜ່ອນ-ຮັບອຸດໜູນບໍານານ ໃນງວດ ທີ III ປີ2024).

**4.** ກ່ຽວກັບການຮຽນປະລິນຍາເອກ (ປອ) ຂອງ **ສະຫາຍ ສາກົນ ພອນປະເສີດ** ກໍາມະການພັກແຂວງ, ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ. ກອງປະຊຸມເຫັນດີໃຫ້ລາຍງານຄະນະຈັດຕັ້ງສູນກາງພັກ ຕາມຄວາມເປັນຈິງ, ທັງນີ້ກໍ່ເພື່ອໃຫ້ຂັ້ນເທິງຮັບຊາບ ແລະ ໃຫ້ທິດຊີ້ນໍາ.

**II. ມາດຕະການຜັນຂະຫຍາຍ:**

ມອບໃຫ້ບັນດາສະຫາຍກໍາມະການຄະນະປະຈໍາພັກແຂວງ ເອົາໃຈໃສ່ຊີ້ນໍາໃນການຈັດຕັ້ງປະຕິບັດບັນດາໜ້າວຽກງານທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງຕົນໃຫ້ມີປະສິດທິຜົນ.

**ຕ.ຄະນະປະຈໍາພັກແຂວງ**

**ເລຂາພັກແຂວງ**

ເຫລັກໄຫລ **ສີວິໄລ**



สแกนด้วย CamScanner